# ການກວດຫາເຊື້ອ
# ໂຣກປອດແຫ້ງ
# ໂດຍການທົດລອງສັກ
# ເຊື້ອຢາໃສ່ທີ່ຜິວໜັງ

Developed by the
Minnesota Department of Health,
Tuberculosis Prevention and Control Program
August 2002 phone: (612) 676-5414

This is one in a series of four patient education pamphlets that addresses TB to be used in various clinical situations.

**Mantoux Skin Test for Tuberculosis, Lao**

# ເຊື້ອໂຣກປອດແຫ້ງ ແລະ ການອັກເສບ

ໂຣກປອດແຫ້ງ
ສາມາດ ປິ່ນປົວໄດ້

ປອດແຫ້ງ ເປັນພຍາດທີ່ອັນຕະຣາຍທີ່ສຸດ ທີ່ເກີດມາຈາກ ວັນນະໂຣກ ໂດຍຈະຂະຫຍາຍຕົວອອກ ຢູ່ໃນຣ່າງກາຍ ຂອງຄົນເຮົາແລະມັນກໍທຳລາຍ ເນື້ອເຍື່ອຕ່າງໆຂອງຣ່າງ ກາຍ, ແລະມັນກໍມີ ຜົນກະທົບກະເທືອນເຖິງ ປອດຂອງທ່ານອີກ, ຕລອດເຖິງທຸກໆອະວັຍະວະຕ່າງໆ ຂອງຣ່າງກາຍ. ທີບີ ນີ້ ຈະລະບາດ ຕິດຕໍ່ ຈາກ ຜູ້ນຶ່ງໄປຫາອີກຜູ້ນຶ່ງ ໂດຍທາງອາກາດຫາຍໃຈ.

ປະຕິກິຣິຍາ ຂອງ ພຍາດໂຣກປອດແຫ້ງ ນີ້ມີຄື:

- ໄອຫຼາຍ
- ໄອເປັນຂີ້ກະເຍີ
- ໄອອອກເປັນເລືອດ
- ເຈັບໜ້າເອິກ ໃນເວລາໄອ
- ນ້ຳໜັກ ລຸດລົງ
- ເປັນໄຂ້
- ມີເຫື່ອອອກ ໃນຕອນກາງຄືນ
- ເຈັບໃນບໍຣິເວນ ບ່ອນທີ່ມີພຍາດເກີດ

ໃນເມື່ອເວລາ ຄົນເປັນໂຣກປອດແຫ້ງ ໄອ, ຈາມ, ແລະຮ້ອງ, ເຊື້ອໂຣກນັ້ນກໍຈະເລື່ອນລອຍ ອອກໄປໃນອາກາດ.
ຄົນອື່ນກໍຫາຍໃຈເອົາອາກາດ ທີ່ມີເຊື້ອໂຣກເຂົ້າໄປໃນ ຣ່າງກາຍ, ນີ້ເອີ້ນວ່າ ການປອດອັກເສບຈາກເຊື້ອໂຣກປອດແຫ້ງ.

ບຸກຄົນ ຜູ້ທີ່ຕິດເຊື້ອໂຣກປອດອັກເສບ ນີ້ອາດຈະ:

- ບໍ່ມີອາການຫຼືປະຕິກິຣິຍາຫຮັງ
- ບໍ່ຮູ້ສຶກເຈັບໄຂ້
- ບໍ່ສາມາດ ທີ່ຈະແຜ່ລະບາດ ເຊື້ອໂຣກປອດນີ້ໄປຫາຜູ້ອື່ນໆ.

ພຍາດປອດແຫ້ງນີ້ຈະຝັງ ຕົວຢູ່ໃນ ຣ່າງກາຍ ຂອງຄົນໄປນານຫຼາຍໆປີ ໂດຍທີ່ບໍ່ທຳໃຫ້ເຈັບໄຂ້, ຖ້າຫາກຜູ້ໃດຕິດເຊື້ອໂຣກນີ້ແລ້ວບໍ່ໄດ້ ກິນຢາປິ່ນປົວ, ເຂົາອາດຈະໄຂ້ໄດ້ຍ້ອນເຊື້ອໂຣກນີ້ ແລະຫຼັງຈາກນັ້ນມັນກໍແກ່ຕົວຂື້ນ ແລະສາມາດແຜ່ລະບາດ ອອກຈາກທ່ານ ໄປຕິດໃສ່ຜູ້ອື່ນ.

ທ່ານອາດຈະຕິດເຊື້ອໂຣກປອດແຫ້ງ ໄດ້ຖ້າຫາກວ່າ ທ່ານເຂົ້າໄປຢູ່ໃກ້ກັບບຸກຄົນ ຜູ້ທີ່ເປັນໂຣກປອດແຫ້ງ (ເຖິງແມ່ນວ່າ ທ່ານຈະບໍ່ຮູ້ວ່າ ເຂົາເປັນໂຣກປອດແຫ້ງກໍຕາມ)ຄົນທີ່ວໆໄປກໍຄືກັນເຂົາອາດຈະບໍ່ຮູ້ວ່າ ຕົນເອງຕິດ ຫຼືມີເຊື້ອ ໂຣກປອດແຫ້ງ ຢູ່ໃນຣ່າງກາຍ.

## ການກວດໂຣກປອດແຫ້ງ ທີ່ຜີວໜັງMantoux

ການກວດທີ່ຜີວໜັງMantoux ເປັນວິທີດຽວທີ່ຈະຮູ້ໄດ້ວ່າທ່ານ ນັ້ນຕິດໂຣກປອດແຫ້ງ ຈາກການຫາຍໃຈເອົາ ເຊື້ອໂຣກເຂົ້າໄປທາງປອດ. ວິທີກວດນີ້ຄື ທ່ານໝໍຈະໄດ້ສັກເຊື້ອຢາ ທີ່ຊື່ວ່າທູເບີຄຸລິນເຂົ້າຝັງໄວ້ທີ່ກ້ອງແຂນ ຂອງທ່ານ.
ຫຼັງຈາກນັ້ນມັນກໍອາດຈະໄຄ່ ແລະມີປ່ານແດງ ເກີດຂື້ນ.
ທ່ານຕ້ອງໄດ້ກັບຄືນໄປ ພົບທ່ານໝໍອີກຫຼັງຈາກ ສອງສາມ ວັນ ທີ່ໄດ້ສັກເຊື້ອ ຢານັ້ນ ເຂົ້າ ໄປເພື່ອ ທ່ານໝໍຈະໄດ້ ເບິ່ງ ຜົນປະກົດ ຂອງມັນ.

ການທົດລອງທີ່ຜີວໜັງ
ແມ່ນການກວດຊອກ
ຫາເຊື້ອໂຣກປອດ
ແຫ້ງ

ເຖິງແມ່ນວ່າທ່ານ ຈະໄດ້ ສັກຢາBCG (Bacille Calmette-Guerin)
ເພື່ອປ້ອງກັນໄວ້ແລ້ວໃນອະດີດ ກໍຕາມ. ແຕ່ທ່ານກໍຍັງຈະຕ້ອງໄດ້ກວດວິທີນີ້ເໝືອນກັນ. ເພາະວ່າການ ສັກຢາBCG ປ້ອງກັນໄວ້ນັ້ນ, ບໍ່ໝາຍເຖິງວ່າ ມັນ ຈະ ຊ່ອຍ ປ້ອງກັນ ທ່ານໄດ້ໝົດຈາກ ການຕິດຈາກ ເຊື້ອ ໂຣກ ປອດ ແຫ້ງ ນີ້.

ຖ້າຫາກວ່າຜົນຂອງການກວດໂຣກປອດແຫ້ງ ທີ່ຜີວໜັງຫາກເຫັນ ວ່າທ່ານຕິດເຊື້ອໂຣກ ຫຼື
ທ່ານຫາກເກີດມີອາການຂອງໂຣກປອດ ແຫ້ງທ່ານຕ້ອງໄດ້ຖືກສ່ອງໄຟຟ້າ ເພາະຈະໄດ້ຮູ້ເຫັນວ່າ ເຊື້ອໂຣກ
ນັ້ນໄດ້ທຳລາຍປອດ ຂອງທ່ານຫຼາຍເທົ່າໃດແລ້ວ.
ແລະອາດຈະໄດ້ກວດກາ ສິ່ງອື່ນໆອີກເພື່ອຈະໄດ້ ຮູ້ວ່າທ່ານຄວນ ຈະໄຊ້ຢາປິ່ນປົວຫຼືບໍ່.

## ການປິ່ນປົວຮັກສາ ໂຣກປອດແຫ້ງ ອັກເສບ

ບາງເທື່ອ ທ່ານອາດຈະໄດ້ຖືກສັ່ງໃຫ້ຮັບປະທານຢາ ເພື່ອມັນຈະຊ່ອຍປ້ອງກັນບໍ່ໃຫ້ເຊື້ອໂຣກນີ້ ເກີດຂື້ນກັບທ່ານໃນອານາຄົດ.
ຢາເຫຼົ່ານີ້ຈະເໝາະສົມກັບບຸກຄົນ ຫຼື ທ່ານ ຖ້າຫາກວ່າທ່ານ:

ດ

- ຢູ່ໃກ້ຄຽງກັບຄົນຜູ້ທີ່ເປັນໂຣກປອດແຫ້ງ
- ເຄີຍໄດ້ສ່ອງໄຟຟ້າ ໃນຜ່ານມາ ເພາະເຄີຍຕິດເຊື້ອໂຣກປອດ
- ມີສຸຂພາບທີ່ບໍ່ສົມບູນ ທີ່ຂ້ອນຂ້າງຈະມີໂອກາດ ທີ່ຈະເລີ່ມເປັນໂຣກປອດແຫ້ງໄດ້.

## ການປິ່ນປົວຮັກສາໂຣກປອດແຫ້ງ

ຢາປິ່ນປົວໂຣກປອດແຫ້ງ ນັ້ນມີສຳຣັບໄວ້ບໍຣິການຢູ່ແລ້ວ.
ໂຣກປອດແຫ້ງນີ້ຈະປິ່ນປົວຮັກສາໄດ້ໃຫ້ເຊົາໝົດ
ນັ້ນກໍຂື້ນຢູ່ກັບການຮັບປະທານ ຢາ ຕາມຄຳສັ່ງ
ຂອງທ່ານໝໍທີ່ເພິ່ນໄດ້ກຳນົດໄວ້ໃຫ້.